ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

2613 /ຫກ
ເລກທີ /ຫກ
ນະຄອນຫຼວງວຽງຈັນ, ວັນທີ 12 ກໍລະກົດ 2022

## ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍແຈ້ງເຊີນບັນດາບໍລິສັດ/ຫ້າງຮ້ານທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການສະໜອງ ການຈັດຊື້ສິ່ງກະສິ ເພື່ອສະໜອງໃຫ້ແກ່ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ. ໄລຍະການຈັດສົ່ງເຖິງ ສາງກະຊວງສຶກສາທິການ ແລະ ກິລາ (ສາງຫຼັກ 03) ພາຍໃນ 02 ເດືອນ ພາຍຫຼັງເຊັນສັນຍາ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກວ້າງພາຍໃນ ທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນ ແມ່ນອະນຸຍາດໃຫ້ທຸກບໍລິສັດ/ຫ້າງຮ້ານ ທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດ/ຫ້າງຮ້ານ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ, ສອບຖາມຂໍ້ມູນ ແລະ ຊື້ຊອງເອກະສານປະມູນຄົບຊຸດທີ່ເປັນພາສາລາວໄດ້ ທີ່ພະແນກຄຸ້ມຄອງຊັບສິນ ແລະ ສະໜອງວັດສະດຸ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນເລກ 1 ລ້ານຊ້າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໂທລະສັບ/ແຟັກ: 021 217206, ເລີ່ມແຕ່ວັນທີ 13 ກໍລະກົດ 2022 ຕາມວັນເວລາລັດຖະການ, ໃນລາຄາ 800.000 ກີບ ( ແປດຮ້ອຍພັນກີບຖ້ວນ ), ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 425 ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 10:00 ໂມງ ຂອງວັນທີ 18 ສິງຫາ 2022;
6. ບໍ່ອະນຸຍາດຍື່ນຊອງປະມູນທີ່ສົ່ງມາທາງເອເລັກໂຕນິກ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກະສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 18 ສິງຫາ 2022 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນເຂົ້າຮ່ວມ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກາງດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ຮອງ/ຮສ.ຫົວໜ້າຫ້ອງການ

ພົມມະແສງ ທິບພະວົງ

ພະແນກຄຸ້ມຄອງຊັບສິນ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ
ໂທ 021 217206, 020 22223244